ໃຊ້ເພື່ອການສົນທະນາເທົ່ານັ້ນ

# ອະນຸພາກພື້ນແມ່ນ້ຳຂອງ

## ເພື່ອການພັດທະນາແບບຍືນຍົງ ແລະສະເໝີພາບ:

## ແຜນຍຸດທະສາດ ແລະແຜນການປະຕິບັດງານ ສຳຫຼັບ

## ແລວເສດຖະກິດເໜືອ-ໃຕ້

## North-South Economic Corridor (NSEC)

**ກຸມພາ 2009**

# ບົດສະຫຼຸບໂດຍຫຍໍ້

**ພາກສະເໜີ**

ໃນກອງປະຊຸມລັດຖະມົນຕີ GMS ຄັ້ງທີ VIII ບັນດາລັດຖະມົນຕີໄດ້ເຫັນດີເຫັນພ້ອມກຳນົດເອົາການພັດທະນາແລວເສດຖະກິດເໜືອ-ໃຕ້ (North-South Economic Corridor, NSEC) ໃຫ້ເປັນໜຶ່ງໃນສາມບູລິມະສິດການພັດທະນາແລວເສດຖະກິດ ພາຍໃຕ້ກອບການຮ່ວມມືດ້ານເສດຖະກິດອະນຸພາກພື້ນແມ່ນ້ຳຂອງ (GMS Program).[1] ການພັດທະນາແລວເສດຖະກິດເໜືອ-ໃຕ້ ໄດ້ຖືກຮັບຮອງເຂົ້າໃນແຜນງານຍຸດທະສາດພັດທະນາ 10 ປີ ໂດຍບັນດາທ່ານນາຍົກລັດຖະມົນຕີຂອງບັນດາປະເທດສະມາຊິກ GMS ທີ່ກອງປະຊຸມສຸດຍອດຄັ້ງທຳອິດ ທີ່ພະນົມເປັນ ຣາຊະອານາຈັກກຳປູເຈ້ຍ ໃນປີ 2002.

ແຜນຍຸດທະສາດ ແລະແຜນການປະຕິບັດ ເພື່ອການພັດທະນາແລວເສດຖະກິດເໜືອ-ໃຕ້ ມີເປົ້າໝາຍ (1) ເຮັດໃຫ້ແບບວິທີການພັດທະນາແລວເສດຖະກິດຊຶ່ງກວມເອົາຫຼາກຫຼາຍຂະແໜງການ ສາມາດປະຕິບັດຕົວຈິງໄດ້, (2) ກຳນົດຈຸດສຸມ, ເພີ່ມທະວີການປະສານງານ ແລະຮັບປະກັນການພັດທະນາ NSEC ໃຫ້ມີປະສິດທິຜົນ ແລະຍືນຍົງ, ແລະ (3) ຄົ້ນຄວ້າຫາແຫຼ່ງທຶນທາງດ້ານການເງິນ ແລະວິຊາການຈາກຫຼາຍແຫຼ່ງ ແລະເພີ່ມທະວີຈຳນວນຜູ້ມີສ່ວນຮ່ວມໂດຍສະເພາະແມ່ນຈາກລະດັບທ້ອງຖິ່ນ. ແລວເສດຖະກິດເໜືອ-ໃຕ້ ປະກອບມີ 3 ແລວເສດຖະກິດຫຼັກ (ເບິ່ງຕາມແຜນທີ່ GMS) ຊຶ່ງເຊື່ອມໂຍງສູນກາງເສດຖະກິດ ແລະພົນລະເມືອງໃນພາກເໜືອ ແລະກາງຂອງພາກພື້ນເຂົ້າດ້ວຍກັນຄື: (1) ຄຸນມິງ-ຊຽງລາຍ-ບາງກອກ ໂດຍຜ່ານ ສປປ ລາວ ຫຼື ສະຫະພາບມຽນມາ (ແລວເສດຖະກິດຍ່ອຍ NSEC ຕາເວັນຕົກ); (2) ຄຸນມິງ-ຮ່າໂນ້ຍ ໂດຍຜ່ານ ຢູຢີ ຫຼື ຟັງເຊັງ-ດົງຊີງ-ມົງໄຊ (ຫຼືວ່າ ແລວເສດຖະກິດຍ່ອຍ NSEC ຕາເວັນອອກ).

**ໂອກາດ ແລະທ່າແຮງບົ່ມຊ້ອນ -** ແລວເສດຖະກິດເໜືອ-ໃຕ້ ເປັນ "ແລວເສດຖະກິດໂດຍທຳມະຊາດ" ໃນອະນຸພາກພື້ນແມ່ນ້ຳຂອງ ໃນຄວາມໝາຍວ່າ ຕາຂ່າຍການຂົນສົ່ງຫຼາຍຮູບແບບ ແລະໂຄງຮ່າງພື້ນຖານມີທິດໂດຍລວມຈາກເໜືອຫາໃຕ້. ແລວເສດຖະກິດມີທີ່ຕັ້ງຍຸດທະສາດ ຊຶ່ງເຊື່ອມໂຍງເສດຖະກິດຂອງ ສປ ຈີນ ແລະ ໄທ ທີ່ມີການພັດທະນາກ້າວໜ້າກວ່າ ແລະເປັນເສດຖະກິດອຸດສາຫະກຳເຂົ້າຫາກັນ. NSEC ຍັງເປັນເສັ້ນທາງບໍລິການໃຊ້ດ້ານການຄ້າລະຫວ່າງ ແຂວງຢູນານ (ສປຈີນ) ແລະປະເທດໄທ ແລະເປັນແລວເສັ້ນທາງທີ່ສຳຄັນສຳຫຼັບແຂວງຢູນານ ເພື່ອອອກສູ່ທະເລ. ມັນເປັນແລວການຄ້າຂາຍໂດຍກົງ ລະຫວ່າງພາກໃຕ້ ຂອງສປ ຈີນ ແລະພາກພື້ນຂອງຫວຽດນາມ. ໂດຍມີດ່ານຊາຍແດນເຊື່ອມຕໍ່ ສປ ຈີນ ກັບບັນດາປະເທດອາຊຽນ (ASEAN) ແລວເສດຖະກິດເໜືອ-ໃຕ້ ເປັນປະຕູການຄ້າລະຫວ່າງ ສປ ຈີນ ແລະ

[1] ແລວເສດຖະກິດທັງສອງທີ່ເຫຼືອແມ່ນ: ແລວເສດຖະກິດຕາເວັນອອກ-ຕາເວັນຕົກ (EWEC) ແລະແລວເສດຖະກິດພາກໃຕ້ (SEC).

ASEAN ຊຶ່ງຄາດວ່າຈະຂະຫຍາຍຕົວຢ່າງວ່ອງໄວພາຍໃຕ້ການປະຕິບັດຂໍ້ຕົກລົງວ່າດ້ວຍ ການຄ້າເສລີ ລະຫວ່າງ ສປ ຈີນ ແລະອາຊຽນ. ຍິ່ງໄປກວ່ານັ້ນ NSEC ສາມາດເຊື່ອມຕໍ່ ແຂວງຢູນານ ແລະກວາງຊີ ຂຶ້ນໄປທາງເໜືອກັບແຂວງອື່ນໆຂອງ ສປ ຈີນ ແລະ ລົງທາງພາກໃຕ້ ຜ່ານປະເທດໄທ ເຊື່ອມຕໍ່ເຂົ້າກັບປະເທດມາເລເຊຍ, ສິງກະໂປ ແລະປະເທດ ASEAN ອື່ນໆ. ໂດຍວ່າແລວເສດຖະກິດເໜືອ-ໃຕ້ ຕັດກັບແລວເສດຖະກິດຕາເວັນອອກ-ຕາເວັນຕົກ (EWEC) ຢູ່ທີ່ແຂວງຕາກ ແລະພິດສະນຸໂລກ (ປະເທດໄທ) ສະນັ້ນມັນຈຶ່ງເປັນແລວທາງທີ່ສາມາດເຂົ້າເຖິງທະເລອັນດາມັນ ແລະທະເລຈີນໃຕ້ ພ້ອມທັງສ້າງເງື່ອນໄຂສະດວກເພື່ອການພັດທະນາແລວເສດຖະກິດທັງສອງ.

ແຮງກະຕຸ້ນຊຸກຍູ້ໃນການພັດທະນາ NSEC ມີອີງປະກອບມາຈາກບັນດາປະເທດ GMS. ຢ່າງໃດກໍຕາມ, ແຕ່ລະປະເທດ GMS ຍັງມີຄວາມແຕກຕ່າງກັນດ້ານພູມສັນຖານ, ຊັບພະຍາກອນທຳມະຊາດ, ໂຄງຮ່າງການຜະລິດ, ລະດັບລາຍຮັບ ແລະປັດໃຈອື່ນໆ ຊຶ່ງເປັນພື້ນຖານໃຫ້ແກ່ການສ້າງຜົນປະໂຫຍດຈາກຄວາມໄດ້ປຽບທຽບຖານ ແລະຄວາມເອື້ອອຳນວຍຊຶ່ງກັນແລະກັນໃນ NSEC, ຕົວຢ່າງເຊັ່ນ: ຄວາມແຕກຕ່າງຂອງແຕ່ລະປະເທດໃນ NSEC ໃນການເຂົ້າເຖິງແຫຼ່ງທຶນ ແລະເຕັກໂນໂລຊີ, ເນື້ອທີ່ດິນ ແລະແຮງງານທີ່ມີສີມື ແລະຄວາມສາມາດດ້ານການບໍລິຫານ ຊຶ່ງສາມາດໝູນໃຊ້ເຂົ້າໃນການຂະຫຍາຍການເຊື່ອມໂຍງດ້ານເສດຖະກິດຂອງຫຼາຍເຂດຕາມແລວເສດຖະກິດນີ້.

ອີງຕາມຄວາມພ້ອມຂອງປັດໃຈຕ່າງໆ ແລະຄວາມເອື້ອອຳນວຍຊຶ່ງກັນແລະກັນ ຂະແໜງການທີ່ເປັນໂອກາດອັນດີສຳລັບການລົງທຶນໃນ NSEC ລວມມີ: (1) ຂະແໜງກະສິກຳ ແລະອຸດສາຫະກຳສິນຄ້າກະສິກຳເຊັ່ນ: ການປຸງແຕ່ງສະບຽງອາຫານ ແລະການກະສິກຳແບບມີສັນຍາ; (2) ອຸດສາຫະກຳຊັບພະຍາກອນທຳມະຊາດເຊັ່ນ: ການປຸງແຕ່ງແຮ່ທາດ ແລະຜະລິດຕະພັນໄມ້ ແລະອຸດສາຫະກຳພະລັງງານ; (3) ອຸດສາຫະກຳເບົາ ເຊັ່ນ: ອຸດສາຫະກຳເສື້ອຜ້າ, ເກີບ, ເຄື່ອງປະດັບ ແລະສິນຄ້າບໍລິໂພກ; (4) ອຸດສາຫະກຳເຄື່ອງກໍ່ສ້າງ ເຊັ່ນ: ສີມັງ, ເຫຼັກ ແລະໂລຫະ; (5) ອຸດສາຫະກຳເຄື່ອງກົນຈັກກະສິກຳ; (6) ອຸດສາຫະກຳທີ່ເນັ້ນໃຊ້ເຕັກໂນໂລຊີ ເຊັ່ນ: ອຸດສາຫະກຳສິ້ນສ່ວນລົດຍົນ, ເຄື່ອງອີເຫຼັກໂຕນິກ ແລະສິ້ນສ່ວນເຄື່ອງອີເຫຼັກໂຕນິກ; ແລະ (7) ອຸດສາຫະກຳທີ່ເນັ້ນການບໍລິການ ເຊັ່ນ: ການທ່ອງທ່ຽວ ແລະພະລາທິການ ລວມທັງອຸດສາຫະກຳບໍລິການທີ່ພັກ. ເຖິງແມ່ນວ່າບັນດາຂະແໜງການ ແລະຂະແໜງການຍ່ອຍເຫຼົ່ານີ້ຈະມີຢູ່ຕາມທຸກໆຈຸດໃນ NSEC ແຕ່ມັນກໍ່ຍັງມີໂອກາດໃນການລົງເລິກຂະແໜງໃດໜຶ່ງ ຊຶ່ງເກີດຈາກຄວາມແຕກຕ່າງຂອງແຕ່ລະເຂດຕາມແລວເສດຖະກິດນີ້ ເຊັ່ນວ່າ: ຕາມແລວເສດຖະກິດຍ່ອຍຕາເວັນຕົກສາມາດລົງເລິກດ້ານການຄ້າ, ທ່ອງທ່ຽວ, ພະລັງງານ, ພະລາທິການ ແລະອຸດສາຫະກຳເນັ້ນໃຊ້ເຕັກໂນໂລຊີ. ຕາມແລວເສດຖະກິດຍ່ອຍພາກກາງສາມາດເລັ່ງໃສ່ກະສິກຳ, ອຸດສາຫະກຳສິນຄ້າກະສິກຳ ແລະອຸດສາຫະກຳເນັ້ນໃຊ້ແຮງງານ. ຕາມແລວເສດຖະກິດຍ່ອຍຕາເວັນອອກສາມາດລົງເລິກຂະແໜງກະສິກຳ, ອຸກສາຫະກຳສິນຄ້າກະສິກຳ, ຂຸດຄົ້ນບໍ່ແຮ່, ທ່ອງທ່ຽວ, ການຄ້າ ແລະພະລາທິການ.

**ອຸປະສັກ ແລະຂໍ້ຈຳກັດ**: ເພື່ອເຮັດໃຫ້ບັນດາທ່າແຮງບົ່ມຊ້ອນຕ່າງໆໃນ NSEC ປະກົດຜົນເປັນຈິງ ມັນຮຽກຮ້ອງໃຫ້ມີການແກ້ໄຂ ແລະເອົາຊະນະອຸປະສັກ ແລະຂໍ້ຈຳກັດໂດຍການເພີ່ມທະວີຄວາມສາມາດແຂ່ງຂັນ ແລະການຮ່ວມມືດ້ານເສດຖະກິດຕາມແລວເສດຖະກິດນີ້. ອຸປະສັກຫຼັກລວມມີ: ຄວາມຂາດເຂີນຂອງເສັ້ນທາງເຊື່ອມຕໍ່ ແລະສິ່ງອຳນວຍຄວາມສະດວກຕ່າງໆໃນບາງເຂດຕາມແລວ NSEC; ຄວາມຂາດເຂີນ ແລະຕົ້ນທຶນສູງຂອງລະບົບພະລາທິການ ທີ່ໜ່ວງໜ່ຽວການເຕີບໂຕຂອງຂະແໜງການຄ້າຕາມແລວ NSEC; ນະໂຍບາຍ ແລະກົດລະບຽບຕ່າງໆຕໍ່ກັບການເຄື່ອນຍ້າຍສິນຄ້າ ແລະພາຫານະຜ່ານແດນ; ຊັບພະຍາກອນມະນຸດທີ່ຍັງມີທັກສະຕ່ຳໃນບາງເຂດຂອງແລວເສດຖະກິດນີ້; ປັດໃຈດ້ານສະຖາບັນເຊັ່ນ: ການປະສານງານທີ່ຍັງອ່ອນແອລະຫວ່າງໜ່ວຍງານຕ່າງໆ ທີ່ກ່ຽວຂ້ອງກັບການອຳນວຍຄວາມສະດວກດ້ານການຂົນສົ່ງ, ການຄ້າ ແລະການລົງທຶນ ທັງໃນລະດັບສູນກາງ ແລະທ້ອງຖິ່ນ. ຍິ່ງໄປກວ່ານັ້ນ ຄວາມຂາດເຂີນຂໍ້ມູນຂ່າວສານກ່ຽວກັບແຜນງານໂຄງການພັດທະນາ NSEC ຍັງເປັນອີກບັນຫາໜຶ່ງທີ່ເພີ່ມໃສ່ອຸປະສັກ ແລະຂໍ້ຈຳກັດຂ້າງເທິງ.

**ຂໍ້ວິຕົກກັງວົນ ແລະຄວາມສ່ຽງ -** ເຖິງແມ່ນວ່າການພັດທະນາ NSEC ຈະສ້າງຜົນປະໂຫຍດໃຫ້ກັບປະຊາຊົນໃນທ້ອງຖິ່ນດ້ວຍການເພີ່ມບໍລິມາດການຄ້າ ແລະການລົງທຶນ, ການເປີດໂອກາດໃນການສ້າງລາຍຮັບ, ການຫຼຸດຜ່ອນຄວາມທຸກຍາກ ແລະການເຮັດໃຫ້ຄຸນນະພາບຂອງຊີວິດດີຂຶ້ນ ແຕ່ມັນກໍ່ຍັງມີຂໍ້ວິຕົກກັງວົນ ແລະຄວາມສ່ຽງ ທີ່ສົ່ງຜົນກະທົບທາງລົບຕໍ່ກັບຊີວິດຂອງປະຊາຊົນທີ່ອາໄສຢູ່ຕາມແລວ NSEC ແລະໃກ້ຄຽງ. ຂໍ້ວິຕົກກັງວົນ ແລະຄວາມສ່ຽງດ້ານສັງຄົມລວມມີ: ການຍ້າຍຖິ່ນຖານຂອງປະຊາຊົນທ້ອງຖິ່ນ ແລະຊົນເຜົ່າຕ່າງໆ, ການແຜ່ລະບາດຂອງພະຍາດຕິດແປດ, ການຄ້າມະນຸດ (ໂດຍສະເພາະຜູ້ຍິງ ແລະເດັກ) ແລະການຄ້າຜິດກົດໝາຍ, ການເພີ່ມຂຶ້ນຂອງລາຄາທີ່ດິນ ແລະອຸບັດຕິເຫດ ແລະລວມທັງຄວາມສ່ຽງດ້ານສິ່ງແວດລ້ອມເຊັ່ນ: ການທຳລາຍປ່າໄມ້, ການສູນເສຍຊີວະນາໆພັນ ແລະການເຊື່ອມໂຊມດ້ານສິ່ງແວດລ້ອມແລະອື່ນໆ. ເພາະສະນັ້ນ ຍຸດທະສາດເພື່ອການພັດທະນາ NSEC ຈະຕ້ອງໄດ້ຄຳນຶງເຖິງ ແລະຮັບຮູ້ວິທີການແກ້ໄຂຂໍ້ເສຍເຫຼົ່ານີ້.

**ວິໄສທັດ, ເປົ້າໝາຍ ແລະບູລິມະສິດດ້ານຍຸດທະສາດ -** ວິໄສທັດໄລຍະຍາວຂອງການພັດທະນາ NSEC ແມ່ນເພື່ອເຮັດໃຫ້ມັນກາຍເປັນແລວເສດຖະກິດທີ່ມີຄວາມກ້າວໜ້າ ແລະເຊື່ອມໂຍງກັບແລວເສກຖະກິດອື່ນໆ, ເປັນທິວເຄື່ອງກົນເພື່ອການພັດທະນາດ້ານເສດຖະກິດ ແລະສັງຄົມຕາມແລວທິດເໜືອ-ໃຕ້ ຂອງ GMS, ເປັນປະຕູການຄ້າລະຫວ່າງ ASEAN ແລະ ສປຈີນ, ເປັນເຂດທີ່ມີການຈ້າງງານ, ການເຕີບໂຕດ້ານລາຍຮັບ ແລະການຫຼຸດຜ່ອນຄວາມທຸກຍາກໃນຂົງເຂດ GMS. ການພັດທະນາ NSEC ແມ່ນແນໃສ່ເຮັດໃຫ້ແຕ່ລະເຂດຂອງມັນມີການພັດທະນາແບບຍືນຍົງ ແລະເທົ່າທຽມກັນ ທີ່ເກີດຈາກການໄດ້ຮັບຜົນປະໂຫຍດເທົ່າກັນ, ການປົກປ້ອງສິດທິຂອງກຸ່ມປະຊາກອນທີ່ອ່ອນແອ ແລະການປົກປ້ອງສິ່ງແວດລ້ອມຢ່າງມີປະ

ສິດທິຜົນ. ເປົ້າໝາຍອັນສຳຄັນຂອງການພັດທະນາ NSEC ແມ່ນເພື່ອຫຼຸດຜ່ອນຄວາມແຕກໂຕນກັນຂອງລາຍໄດ້, ເພີ່ມໂອກາດໃນການຈ້າງງານ, ສ້າງລາຍໄດ້ໃຫ້ສູງກວ່າເກົ່າ ແລະປັບປຸງເງື່ອນໄຂການດຳລົງຊີວິດຂອງປະຊາຊົນຕາມແລວເສດຖະກິດ ແລະອ້ອມຂ້າງໃຫ້ດີຂຶ້ນກວ່າເກົ່າ. ບູລິມະສິດດ້ານຍຸດທະສາດ ໃນການພັດທະນາ NSEC ແມ່ນ (1) ເຜີຍແຜ່ບັນດາມາດຕະການຕ່າງໆເພື່ອຮັບມືກັບບັນຫາດ້ານສັງຄົມ ແລະສິ່ງແວດລ້ອມ; (2) ເພີ່ມທະວີເສັ້ນທາງເຊື່ອມຕໍ່ ແລະສິ່ງອຳນວຍຄວາມສະດວກໃຫ້ແກ່ກິດຈະກຳດ້ານເສດຖະກິດຕາມແລວທາງເສດຖະກິດ; (3) ອຳນວຍຄວາມສະດວກດ້ານການຂົນສົ່ງ ແລະການຄ້າຜ່ານແດນ; (4) ສົ່ງເສີມ ແລະອຳນວຍຄວາມສະດວກດ້ານການລົງທຶນໃນຂະແໜງການ ແລະອຸດສາຫະກຳຕ່າງໆ; (5) ແກ້ໄຂບັນຫາຂໍ້ຈຳກັດດ້ານຊັບພະຍາກອນມະນຸດ ທັງໃນພາກລັດ ແລະເອກະຊົນ; ແລະ (6) ຈັດຕັ້ງ ແລະເສີມຂະຫຍາຍກົນໄກການປະສານງານລະຫວ່າງ ສະຖາບັນຕ່າງໆ ແລະການຈັດຕັ້ງປະຕິບັດຂໍ້ລິເລີ່ມໃນການພັດທະນາ NSEC ພ້ອມທັງຂະຫຍາຍການເປັນຄູ່ຮ່ວມພັດທະນາຂອງພາກລັດ-ເອກະຊົນ.

**ແຜນຈັດຕັ້ງປະຕິບັດ -** ວິໄສທັດ, ເປົ້າໝາຍ ແລະ ບູລິມະສິດດ້ານຍຸດທະສາດເພື່ອການພັດທະນາ NSEC ໄດ້ຖືກພັນຂະຫຍາຍອອກໃນແຜນການປະຕິບັດງານພ້ອມກັບການກຳນົດເວລາ ແລະການຕິດຕາມ ທີ່ຈະເປັນທິດນຳໃນການວາງແຜນງານ ແລະການຈັດຕັ້ງປະຕິບັດແຜນງານ ແລະໂຄງການການພັດທະນາ NSEC, ປັບປຸງຂອດການປະສານງານ ແລະກຳນົດຂົງເຂດທີ່ຕ້ອງເອົາໃຈໃສ່ພິເສດ. ແຜນປະຕິບັດງານນີ້ຍັງບອກເຖິງມາດຕະການຕ່າງໆ (ແຜນງານ ແລະໂຄງການຕ່າງໆ) ເຊັ່ນຄາດໝາຍຂອງຜົນໄດ້ຮັບ, ຕົວຊີ້ບອກຄວາມຄືບໜ້າ, ໜ່ວຍງານຮັບຜິດຊອບການປະຕິບັດງານ ແລະກອບກຳນົດເວລາການປະຕິບັດ. ແຜນປະຕິບັດງານຍັງກວມເອົາມາດຕະການທີ່ກຳລັງປະຕິບັດຢູ່ ແລະຄາດວ່າຈະປະຕິບັດໃນຊ່ວງປີ2008-2012 ຊຶ່ງລວມມີ ຂະແໜງການ ແລະຂົງເຂດການຮ່ວມມືຄື: ການຂົນສົ່ງ, ການສື່ສານ, ການອຳນວຍຄວາມສະດວກດ້ານການຂົນສົ່ງ ແລະການຄ້າ, ການສົ່ງເສີມການລົງທຶນ, ການພັດທະນາການທ່ອງທ່ຽວ ແລະພະລາທິການ, ການພັດທະນາເຂດເສດຖະກິດຊາຍແດນ, ການຄວບຄຸມພະຍາດຕິດແປດ, ການພັດທະນາສີມືແຮງງານ, ການສ້າງຄວາມເຂັ້ມແຂງດ້ານສະຖາບັນ ແລະຄວາມອາດສາມາດ ແລະການຮ່ວມມືລະຫ່ວາງພາກລັດ ແລະເອກະຊົນ.

**ກອບການຈັດຕັ້ງ -** ກອບການປະສານງານລະຫ່ວາງສະຖາບັນຕ່າງໆ ເພື່ອການປະຕິບັດແຜນຍຸດທະສາດ ແລະ ແຜນການປະຕິບັດ ສຳລັບ NSEC ປະກອບມີໜ່ວຍງານທີ່ນອນຢູ່ໃນໂຄງຮ່າງການຈັດຕັ້ງ GMS ແລະ ກົນໄກໃໝ່ທີ່ເສີມຂະຫຍາຍກອບການປະສານງານ ລະຫ່ວາງສະຖາບັນໃນປະຈຸບັນ. ກົນໄກໃໝ່ເຫຼົ່ານີ້ລວມມີຄື: ເວທີແລວເສດຖະກິດ (ECF), ກອງປະຊຸມເຈົ້າແຂວງຊຶ່ງລວມຢູ່ໃນ ECF ແລະ ກອງປະຊຸມອື່ນໆທີ່ຈະຖືກຮັບຮອງເອົາໃນ ເວທີທຸລະກິດ (GMS-BF) ເພື່ອຊຸກຍູ້ການພັດທະນາແລວເສດຖະກິດ.

**ດ້ານການເງິນ** - ງົບປະມານທີ່ຈໍາເປັນໃນການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະແຜນການປະຕິບັດ ສໍາລັບ NSEC ມີສູງເຖິງ 5 ຕື້ໂດລາ ສໍາຫຼັບ 2008 – 2012 ຫຼື 1 ຕື້ໂດລາຕໍ່ປີໂດຍສະເລ່ຍຊຶ່ງບໍ່ລວມການລົງທຶນຈາກພາກເອກະຊົນໃນໂຄງການການຄ້າ ແລະອຸດສະຫະກໍາຕ່າງໆ. ຮອດທ້າຍເດືອນທັນວາ 2006, ຈໍານວນ 6.9 ຕື້ໂດລາ ໄດ້ຖືກນໍາໃຊ້ເຂົ້າໃນໂຄງການບູລົມະສົດ ພາຍໃຕ້ກອບແຜນງານ GMS. ໃນນັ້ນ ຈໍານວນ 2.8 ຕື້ໂດລາ ແມ່ນລົງທຶນໃສ່ໂຄງການພັດທະນາ NSEC, ເຊິ່ງໝາຍເຖິງໂດຍສະເລ່ຍ 4-5 ແສນໂດລລາຕໍ່ປີ ໃນຊ່ວງ 6-7 ປີ (2001 – 2008) ຜ່ານມາ. ຕົວເລກເຫຼົ່ານີ້ບົ່ງບອກເຖິງຄວາມຈໍາເປັນທີ່ຈະຕ້ອງເພີ້ມທຶນຂຶ້ນອີກເທົ່າຕົວ ເພື່ອການພັດທະນາ NSEC ໃນອີກ 5 ປີ ຂ້າງໜ້າ.

**ການຕິດຕາມແລະປະເມີນຜົນ** - ກອງປະຊຸມແຕ່ລະຂະແໜງການ ແລະ ໜ່ວຍປະຕິບັດງານຕ່າງໆຂອງແຜນງານ GMS ມີໜ້າທີ່ຕິດຕາມການປະຕິບັດແຜນຍຸດທະສາດ ແລະແຜນການປະຕິບັດງານ ສໍາລັບ NSEC, EWEC ແລະ SEC. ແຜນຍຸດທະສາດ ແລະແຜນການປະຕິບັດງານ ສໍາລັບ NSEC ຈະໄດ້ຖືກທົບທວນເປັນຊ່ວງໆແລະປັ່ງນແປງຕາມຄວາມເໝາະສົມ. ການຕິດຕາມ ແລະປະເມີນຜົນຂອງແຜນຍຸດທະສາດ ແລະແຜນການປະຕິບັດ ເປັນການຕິດຕາມຜົນຄວາມຄືບໜ້າຂອງໂຄງການເຊັ່ນ: ຈໍານວນຫຼັກກິໂລແມັດໃນການກໍ່ສ້າງເສັ້ນທາງ ຫຼື ຈໍານວນບຸກຂະລາກອນທີ່ໄດ້ຮັບການຝຶກອົບຮົມ ພ້ອມທັງຕິດຕາມຄວາມຄືບໜ້າໃນການບັນລຸຜົນໄດ້ຮັບທີ່ຕ້ອງການ ເຊັ່ນ: ການເພີ້ມຂຶ້ນຂອງກິດຈະກໍາການຄ້າ ແລະການລົງທຶນ. ການລາຍງານຜົນຄວາມຄືບໜ້າຂອງໂຄງການແມ່ນອາດຈະໄດ້ງ່າຍ ແຕ່ການເກັບກໍາຂໍ້ມູນເພື່ອປະເມີນຄວາມຄືບໜ້າໃນການບັນລຸຜົນໄດ້ຮັບ ເປັນເລື່ອງທີ່ຍາກກວ່າເນື່ອງຈາກບັນຫາຂາດເຂີນເວລາ, ຄວາມແນ່ນອນ ແລະຄວາມຄົບຖ້ວນທາງດ້ານສະຖິຕິກ່ຽວກັບທ້ອງຖິ່ນ. ແຜນການປະຕິບັດງານກວມເອົາຂໍ້ສະເໜີກ່ຽວກັບການຮ່ວມມືໃນການອອກແບບ ແລະ ສ້າງລະບົບເພື່ອການເກັບກໍາຂໍ້ມູນດ້ານດ້ານສະຖິຕິການຄ້າ, ການລົງທຶນ, ການທ່ອງທ່ຽວ ແລະຂໍ້ມູນອື່ນໆ ເພື່ອຊ່ວຍບັນດາປະເທດໃນ NSEC ມີຄວາມສາມາດຕິດຕາມຄວາມຄືບໜ້າ ແລະຜົນກະທົບຕ່າງໆໃນ NSEC.

**ປັດໃຈສໍາຄັນເພື່ອຜົນສໍາເລັດ** - ບົດຮຽນຈາກປະສົບການອື່ນໆສະແດງໃຫ້ເຫັນເຖິງປັດໃຈສໍາຄັນຕ່າງໆທີ່ຈະຮັບປະກັນຜົນສໍາເລັດຂອງການພັດທະນາແລວເສດຖະກິດເໜືອ -ໃຕ້ ລວມມີ:

- **ຄວາມຮັບຜິດຊອບ ແລະຄວາມໝັ້ງໝັ້ນອັນແຮງກ້າໃນທຸກໆລະດັບ.** ໃນຂະນະທີ່ເຈົ້າໜ້າທີ່ລະດັບຊາດເປັນຫົວໜ່ວຍຜູ້ອອກນະໂຍບາຍ ແລະຊຸກຍູ້ການພັດທະນາເສດຖະກິດ ມັນມີຄວາມຮຽກຮ້ອງໃຫ້ເຈົ້າໜ້າທີ່ຂັ້ນທ້ອງຖິ່ນ ມີຄວາມຮັບຜິດຊອບຕໍ່ກັບນະໂຍບາຍ ແລະ ການຕັດສິນໃຈຕ່າງໆ.

- **ການມີສ່ວນຮ່ວມຂອງຜູ້ຈະໄດ້ຮັບຜົນປະໂຫຍດ.** ການສະໜັບສະໜູນອັນກ້ວາງຂວາງບໍ່ພຽງແຕ່ຈະຮັບປະກັນການປະຕິບັດແຜນງານ ແລະໂຄງການຕ່າງໆໃຫ້ສະດວກ ແຕ່ຍັງສົ່ງເສີມການສະໜັບສະໜູນ ແລະການຈັດຕັ້ງປະຕິບັດມາດຕະການທີ່ຈຳເປັນໃນປະຕິຮູບນະໂຍບາຍ ແລະກົດລະບຽບ.
- **ດຳເນີນແຜນງານພັດທະນາຊັບພະຍາກອນມະນຸດ.** ຈາກສາເຫດທີ່ລະດັບຄວາມສາມາດໃນຫຼາຍເຂດຂອງ NSEC ຍັງຕ່ຳທັງໃນພາກລັດ ແລະເອກະຊົນ ສະນັ້ນການພັດທະນາຊັບພະຍາກອນມະນຸດຈຶ່ງເປັນບັນຫາຮີບດ່ວນ.
- **ການຕິດຕາມຢ່າງໃກ້ສິດ ແລະ ການແກ້ໄຂຢ່າງມີປະສິດທິຜົນ ແລະທັນເວລາ.** ການຕິດຕາມຜົນຄືບໜ້າຂອງການບັນລຸເປົ້າໝາຍການພັດທະນາ NSEC ແມ່ນມີຄວາມຈຳເປັນເພື່ອຮູ້ໄດ້ເຖິງຂໍ້ຈຳກັດ ແລະປັບຕົວຕາມການປ່ຽນແປງຂອງຄວາມຕ້ອງການ ແລະ ບູລິມະສິດຕ່າງໆຢ່າງທັນເວລາ.
- **ການສະໜັບສະໜູນດ້ານການເງິນຢ່າງພຽງພໍ ແລະຍືນຍົງ**. ການຊ່ວຍເຫຼືອສະໜັບສະໜູນດ້ານການເງິນຈະຮັບປະກັນຄວາມຕໍ່ເນື່ອງໃນການຫັນປ່ຽນ NSEC ຈາກແລວທາງຂົນສົ່ງໄປສູ່ແລວພາລະທິການ ແລະໄປສູ່ແລວເສດຖະກິດໃນໄລຍະຍາວ.
- **ກົນໄກການປະສານງານ ລະຫ່ວາງສະຖາບັນທີ່ມີປະສິດທິຜົນ.** ເພື່ອຮັບປະກັນໃຫ້ມີຄວາມຕໍ່ເນື່ອງມັນຮຽກຮ້ອງໃຫ້ມີກົນໄກການປະສານງານທີ່ເຂັ້ມແຂງ.

ແລວເສດຖະກິດເໜືອ-ໃຕ້ ໃນອະນຸພາກພື້ນແມ່ນ້ຳຂອງ



09-0099f EG